## ແຜນພູມ 13. ປິ່ນປົວຖອກທ້ອງ ແຜນ ຄ: ປິ່ນປົວ ອາການຂາດນ້ຳຮ້າຍແຮງໂດຍໄວ

→ ໃຫ້ປະຕິບັດຕາມລູກສອນ. ຖ້າຄຳຕອບວ່າ ແມ່ນ ໃຫ້ໄປທາງຂວາງ. ຖ້າ ບໍ່ ໃຫ້ລົງລຸ່ມ.

**ເລີ່ມຈາກນີ້**

**ທ່ານສາມາດສົ່ງນ້ຳເຂົ້າເສັ້ນໄດ້ທັນທີບໍ?**

ໄດ້ →

- ➢ ເລີ່ມສົ່ງນ້ຳ RL ຫຼື normal saline 100ml/ກກ ເຂົ້າເສັ້ນທັນທີ ໂດຍແບ່ງໃຫ້ດັ່ງລຸ່ມນີ້. ຖ້າເດັກດື່ມໄດ້ ໃຫ້ດື່ມນ້ຳ ORS ໄປພ້ອມ

| ອາຍຸ | ເລີ່ມຕົ້ນດ້ວຍ 30 ml/ກກ ໃນ: | ຕໍ່ໄປ ໃຫ້ 70 ml/ກກ ໃນ: |
|---|---|---|
| ເດັກອ່ອນ (ຫຼຸດ 12 ເດືອນ) | 1 ຊົ່ວໂມງ[ກ] | 5 ຊົ່ວໂມງ |
| ເດັກ (12 ເດືອນ ເຖິງ 5 ປີ) | 30 ນາທີ[ກ] | 2.5 ຊົ່ວໂມງ |

[ກ] ໃຫ້ຕື່ມໄດ້ອີກເທື່ອໜຶ່ງ ຖ້າກຳມະຈອນຂໍ້ມືຍັງຄ່ອຍ ຫຼື ຄຳບໍ່ໄດ້.

- ■ ປະເມີນເດັກຄືນ ທຸກ 15–30 ນາທີ. ຖ້າສະພາບມີນ້ຳ ທາກຍັງບໍ່ດີຂຶ້ນ, ໃຫ້ປ່ອຍນ້ຳໄວຂຶ້ນ. ແຈ່ຕອ້ງຕິດຕາມອາການນ້ຳເກີນ.
- ➢ ໃຫ້ເດັກດື່ມນ້ຳORS (ປະມານ 5ມລ/ກກ/ຊມ) ໄວທັນທີເມື່ອເດັກສາ ມາດດື່ມໄດ້: ຕາມປົກກະຕິແມ່ນຫຼັງຈາກ 3–4 ຊມ (ເດັກອ່ອນ) ຫຼື 1–2 ຊມ (ເດັກໃຫຍ່).
- ■ ປະເມີນເດັກອ່ອນຫຼັງຈາກ 6ຊມ ແລະ ເດັກໃຫຍ່ ຫຼັງ 3 ຊົ່ວໂມງ. ຈັດປະເພດຂາດນ້ຳ ແລ້ວເລືອກແຜນປິ່ນປົວທີ່ເໝາະສົມ (ກ, ຂ, ຫຼື ຄ) ເພື່ອສືບຕໍ່ການປິ່ນປົວ.

ບໍ່ ↓

**ມີບ່ອນທີ່ສາມາດສົ່ງນ້ຳເຂົ້າເສັ້ນຢູ່ໄກ້ໆ (ພາຍໃນ 30 ນທ ບໍ?**

ມີ →

- ➢ ສົ່ງໄປໂຮງໝໍ **ດ່ວນ** ເພື່ອສົ່ງນ້ຳເຂົ້າເສັ້ນ.
- ➢ ຖ້າເດັກສາມາດດື່ມໄດ້, ສາທິດໃຫ້ແມ່ເບິ່ງວິທີເອົານ້ຳ ORS ໃຫ້ເດັກ ກິນເລື້ອຍໆເທື່ອລະນ້ອຍ.

ບໍ່ ↓

**ທ່ານໄດ້ຮັບການອົບຮົມກ່ຽວກັບການໃຊ້ທໍ່ກະເພາະເພື່ອທົດແທນນ້ຳບໍ?**

ໄດ້ →

ບໍ່ ↓

**ເດັກດື່ມໄດ້ບໍ?**

ໄດ້ →

- ➢ ເລີ່ມທົດແທນນ້ຳORS ທາງທໍ່ (ຫຼື ກິນ): 20 ມລ/ກກ/ຊມ ໄລຍະ 6ຊມ (ລວມທັງໝົດ 120 ມລ/ກກ).
- ■ ປະເມີນອາການຂອງເດັກ ທຸກ 1–2 ຊົ່ວໂມງ:
  - — ຖ້າເດັກຍັງສືບຕໍ່ຮາກ ຫຼື ທ້ອງເບັ່ງຫຼາຍຂຶ້ນ, ໃຫ້ນ້ຳຊ້າລົງ.
  - — ຖ້າສະພາບຂາດນ້ຳຫາກບໍ່ດີຂຶ້ນພາຍຫຼັງ 3 ຊົ່ວໂມງ, ສົ່ງນ້ຳເຂົ້າເສັ້ນ.
- ■ ຫຼັງ 6ຊມ, ໃຫ້ປະເມີນອາການເດັກຄືນໃໝ່ ແລະ ຈັດປະເພດຂາດນ້ຳ ແລ້ວເລືອກແຜນປິ່ນປົວທີ່ເໝາະສົມ (ກ, ຂ, ຫຼື ຄ) ເພື່ອປິ່ນປົວຕໍ່.

ບໍ່ ↓

**ທ່ານໄດ້ຮັບການອົບຮົມກ່ຽວກັບການໃຊ້ທໍ່ກະເພາະເພື່ອທົດແທນນ້ຳບໍ?**

***ໝາຍເຫດ***: *ໃຫ້ສັງເກດເດັກຢ່າງຕໍ່າ 6ຊມ ຫຼັງທົດແທນນ້ຳເພື່ອຄວາມໝັ້ນໃຈວ່າແມ່ສາມາດຮັກສາເດັກບໍ່ໃຫ້ຂາດນ້ຳ ດ້ວຍການເອົານ້ຳ ORS ໃຫ້ ເດັກກິນທາງປາກ.*